*Souphanouvong University Journal of Multidisciplinary Research and Development*
*2024, Vol. 10, Special Issue, 84-88*
*https://doi.org/10.69692/SUJMRD10special84*

# The Instruction of Lao language for Grade 1 of Nan District Primary School, Luangprabang Province, Academic year 2024-2025

**Shaidan KHAMPADITH*, Somchay PHAIGNAVONG, Khamxay CHANHTHAHONG, Phoutthasay MOUNGKHOUNSAVAT, Bounyong PHATTHANA**

*Faculty of Education Souphanouvong University Lao PDR*

***Correspondence:** Shaidan KHAMPADITH, Faculty of Education Souphanouvong University*
*Tel: +8652096676177,Email:* shainamnan@gmail.com

***Submitted: December 05, 2024***
***Revised: December 15, 2024***
***Accepted: December 31, 2024***

**Abstract**

This research was intended to study the instruction of Lao language for Grade 1 of Nan District Primary School, Luangprabang Province, Academic year 2024-2025, which aimed to investigate the instruction of the Lao language for Grade 1. Implementing the curriculum, teaching-learning activities, using instructional materials, measuring and evaluating, and providing facilities are all included in the study framework. It's a quantitative investigation. The 73 participants in the samples were principals and teachers in the primary school. Descriptive statistics and data collection were conducted using questionnaires. To ascertain the means and standard deviation, they were employed in the data analysis process.

A case study of primary schools in the Nan district revealed that teachers follow manuals, teach four skills, organize student-centered teaching, use modern media, and provide a secure learning environment.

**Key words:** Lao language for Grade 1, primary school, instruction

## 1. ພາກສະເໜີ

ພາສາລາວໄດ້ເຂົ້າມາໃນລາວໃນຍຸກຕ່າງໆ ຂອງປະຫວັດສາດ ດ້ວຍການມາຮອດກ່ອນໜ້ານີ້ໂດຍກຸ່ມພາສາ Austro-Asiatic ທີ່ແບ່ງອອກລະຫວ່າງຄົນເວົ້າພາສາກຶ່ມມຸໄປທາງເໜືອ ແລະ ກຸ່ມຊົນເຜົ່າສ່ວນນ້ອຍໃນພາກໃຕ້ຂອງລາວ. ໃນປີ 1930 ຝຣັ່ງໄດ້ສ້າງຕັ້ງສະຖາບັນພຸດທະສາສະນິກະຊົນຢູ່ນະຄອນຫຼວງພະນົມເປັນ ແລະ ຕໍ່ມາບໍ່ດົນສະຖາບັນພຸດທະສາສະໜາຈັນທະບູລີໃນລາວ - ອຸທິດຕົນເພື່ອການສຶກສາດ້ານພາສາ, ສາດສະໜາ ແລະ ວັດທະນະທຳ. ໂຮງຮຽນໄດ້ໃຫ້ການສຶກສາຊັ້ນປະຖົມເປັນພາສາລາວ 3 ປີຢູ່ໃນ (ເຂດປົດປ່ອຍ) ແລະ ຫຼັກສູດດັ່ງກ່າວໄດ້ກາຍເປັນທາງການຫຼາຍຂຶ້ນໃນທ້າຍຊຸມປີ 1960. ການປ່ຽນແປງຫຼັກຂອງພາສາລາວໃນໄວຍະກອນລາວ ຂອງ ພູມມີ ວົງວິຈິດ ແມ່ນໃນການສະກົດຄຳງ່າຍດາຍ ແລະ ຄຳສັບຕ່າງໆ. ນະໂຍບາຍກ່ຽວກັບພາສາຕ່າງປະເທດໄດ້ຖືກສ້າງຕັ້ງຂຶ້ນເປັນ 'ຂໍ້ຄວາມ' ຜ່ານຫຼັກສູດແຫ່ງຊາດ. ໃນປີ 1976 ຫຼັກສູດແຫ່ງຊາດທຳອິດທີ່ຜະລິດພາຍໃຕ້ລັດຖະບານໃໝ່ບໍ່ໄດ້ລວມເອົາການສອນພາສາຕ່າງປະເທດໃນໂຮງຮຽນປະຖົມ (Meyers, 2019).

ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ໃຫ້ຄວາມສຳຄັນໃນການຮຽນພາສາລາວ ພ້ອມທັງພັດທະນາ ແລະ ປັບປຸງຫຼັກສູດການຮຽນ-ການສອນ ໃຫ້ແທດເໝາະກັບສະພາບເສດຖະກິດ-ສັງຄົມ ຂອງເຮົາ ແລະ ໄດ້ວາງວິໄສທັດຮອດປີ 2030 ໄວ້ວ່າ “ ຊັບພະຍາກອນມະນຸດໄດ້ຮັບການພັດທະນາໃຫ້ມີຄຸນນະພາບໃກ້ຄຽງກັບພາກພື້ນ ແລະ ສາກົນ, ເປັນກຳລັງຜະລິດທີ່ເຂັ້ມແຂງ, ຕອບສະໜອງໄດ້ ຕາມຄວາມຕ້ອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດຫຼາຍຂຶ້ນ, ລະດັບການສຶກສາທົ່ວໄປຂອງພົນລະເມືອງລາວໃຫ້ຈົບຊັ້ນມັດທະຍົມຕອນປາຍ, ປະຊາຊົນໄດ້ຮັບການບໍລິການດ້ານສາທາລະນະສຸກຢ່າງທົ່ວເຖິງ ແລະ ມີອາຍຸຍືນສະເລ່ຍ 75 ປີ ” . ບົນພື້ນຖານວິໄສທັດ ແລະ ຍຸດທະສາດ ທີ່ລັດຖະບານ ກຳນົດ; ກະຊວງສຶກສາທິການ ແລະ ກິລາ ຈຶ່ງກຳນົດວິໄສທັດ ດັ່ງນີ້ “ ຮອດປີ 2030 ພົນລະເມືອງລາວທຸກຄົນໄດ້ຮັບການສຶກສາຢ່າງສະເໝີພາບ ແລະ ເທົ່າທຽມກັນ ເພື່ອໃຫ້ເຂົາເຈົ້າໄດ້ພັດທະນາຕົນເອງກາຍເປັນພົນລະເມືອງດີຂອງຊາດ, ມີຄຸນສົມບັດ, ມີສຸຂະພາບເຂັ້ມແຂງ, ມີຄວາມຮູ້, ຄວາມສາມາດສູງ, ມີຄວາມເປັນມືອາຊີບເພື່ອພັດທະນາປະເທດຊາດໃຫ້ສີວິໄລຍືນຍົງ ສາມາດເຊື່ອມໂຍງ ແລະ ແຂ່ງຂັນກັບພາກພື້ນ ແລະ ສາກົນ” (ກະຊວງສຶກສາທິການ ແລະ ກິລາ, 2015).

ວິໄສທັດການຮຽນຮູ້ໃນສະຕະວັດທີ 21 ແມ່ນວິໄສທັດທີ່ເປັນເອກະພາບໃນການຮຽນຮູ້ ເພື່ອຮັບປະກັນຄວາມສຳເລັດຂອງນັກຮຽນ ໃນໂລກທີ່ມີການປ່ຽນແປງຢ່າງຕໍ່ເນື່ອງ ແລະ ການຮຽນຮູ້ບໍ່ເຄີຍຢຸດເຊົາ. ນອກຈາກນີ້, ຍັງເປັນການໃຊ້ທັກສະການຮຽນຮູ້

ຂອງຄົນໃນປະເທດໃຫ້ສອດຄ່ອງກັບຄວາມຕ້ອງການໃນຕະຫຼາດແຮງງານ ສາມາດປະຕິບັດວຽກງານ ແລະ ແກ້ໄຂບັນຫາທີ່ມີຄວາມຊັບຊ້ອນ ເພື່ອໃຫ້ເຂົາເຈົ້າປະສົບຄວາມສໍາເລັດໃນໂລກຍຸກໃໝ່ທີ່ມີການປ່ຽນແປງຢ່າງໄວ (Partnership for twenty first Century skills, 2010).

ວິຊາພາສາລາວຊັ້ນປະຖົມສຶກສາປີທີ 1 ເປັນວິຊາໜຶ່ງທີ່ມີຄວາມສໍາຄັນອັນດັບທໍາອິດ ແລະ ຈໍາເປັນທີ່ສຸດສໍາລັບນັກຮຽນຊັ້ນ ປ.1; ເຊິ່ງມີຈຸດມຸ້ງໝາຍເພື່ອພັດທະນາທັກສະທາງພາສາ ແກ່ນັກຮຽນ ກ່ອນທີ່ ຈະຮຽນຮູ້ ໃນວິຊາອື່ນໆ. ໂດຍອີງໃສ່ລະບົບການສຶກສາໃນໂຮງຮຽນຂອງລາວເຮົາ ແມ່ນການຈັດຕັ້ງການຮຽນ-ການສອນ ຢູ່ໃນໂຮງຮຽນ ຢ່າງເປັນລະບົບປົກກະຕິ, ມີການກໍານົດເວລາຮຽນ ແລະ ມີເນື້ອໃນຫຼັກສູດທີ່ຖືກຕ້ອງຕາມມາດຕະຖານການສຶກສາແຫ່ງຊາດ ເຊິ່ງປະກອບດ້ວຍ ການສຶກສາກ່ອນໄວຮຽນ, ສາມັນສຶກສາ, ອາຊີວະສຶກສາ ແລະ ການສຶກສາຊັ້ນສູງ (ສະພາແຫ່ງຊາດລາວ, 2016).

ສູນສະຖິຕິແຫ່ງຊາດ ໄດ້ລາຍງານດັດສະນີສັງຄົມລາວຄັ້ງທີ 3 ປະຈໍາປີ 2023 ກ່ຽວກັບການຮຽນຂອງນັກຮຽນວ່າ “ສໍາລັບ ທັກສະການອ່ານພື້ນຖານ ຂອງນັກຮຽນຊັ້ນປະຖົມ ໂດຍຄິດໄລ່ອັດຕາສ່ວນຮ້ອຍຂອງເດັກປະສົບຜົນສໍາເລັດ ຕາມສາມບົດທົດສອບກ່ຽວກັບພື້ນຖານການອ່ານ ໄດ້ສະແດງອອກດັ່ງນີ້: ອາຍຸ 7-14 ປີ ໄດ້ 38.5% ແລະ ນັກຮຽນຊັ້ນປີ 2 ໄດ້ 16.2%” (Unicef Lao, 2023).

ບົດວິເຄາະຂອງ ອົງການອຸຍນີເຊບປະຈໍາລາວ ລາຍງານວ່າ: “ປະຈຸບັນ ການສຶກສາ ເຂົ້າສູ່ຍຸກວິທະຍາສາດ, ເຕັກໂນໂລຍີ ແລະ ນະວັດຕະກໍາ. ການອ່ານ ຂອງນັກຮຽນຊັ້ນປະຖົມ ປ.2 ໄດ້ສະແດງໃຫ້ເຫັນວ່າ ຫຼາຍກວ່າ 30 % ຂອງ ນັກຮຽນບໍ່ສາມາດ ອ່ານຄໍາດຽວ ແລະ ໃນບັນດາຜູ້ທີ່ສາມາດອ່ານໄດ້ 57% ບໍ່ເຂົ້າໃຈສິ່ງທີ່ເຂົາເຈົ້າຫາກໍ່ອ່ານ” (Unicef, 2015).

ສະພາການຄົ້ນຄວ້າການສຶກສາອົດສະຕຣາລີປະຈໍາລາວ ລາຍງານຜົນສໍາເລັດທາງການຮຽນຂອງບັນດາປະເທດອາຊີຕາເວັນສ່ຽງໃຕ້ ວ່າ: “ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມີບາງຜົນສໍາເລັດຂອງການຮຽນ ທີ່ຍັງຫຍຸ້ງຍາກທີ່ສຸດ ສໍາລັບນັກຮຽນຊັ້ນປະຖົມໃນສະມາຄົມປະຊາຊາດອາຊີຕາເວັນ ອອກສ່ຽງໃຕ້ (ອາຊຽນ) ດັ່ງຜົນໄດ້ຮັບຈາກ ACER-supported Southeast Asian Learning Metrics (SEA-PLM) 2019 ພົບວ່າຫຼັງຈາກ 5 ປີຂອງການຮຽນຊັ້ນປະຖົມ ມີພຽງແຕ່ 50 % ຂອງນັກຮຽນທີ່ສາມາດຈັບຄູ່ຄໍາດຽວກັບຮູບພາບທີ່ງ່າຍດາຍ” (Jeanene & Yung, 2023).

ອີງໃສ່ຜົນສໍາເລັດການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ 5 ປີ (2016-2020) ຂອງຫ້ອງການສຶກສາທິການ ແລະ ກິລາເມືອງນານ ເຊັ່ນ: ອັດຕາເຂົ້າຮຽນໃໝ່ ປະຕິບັດໄດ້ 100%, ດັດສະນີຄວາມສະ ເໝີພາບຍິງ-ຊາຍ ປະຕິບັດ 1.0, ອັດຕາປາລະການການຮຽນໄດ້ລຸດລົງ ຈາກປີ ສົກຮຽນ 2015-2016 ມີ 3.5 % ມາເປັນ 1.51 % ໃນສົກຮຽນ 2019-2020 ເຖິງແມ່ນວ່າຜົນສໍາເລັດການຈັດຕັ້ງປະຕິບັດ ຈະໄດ້ຮັບຜົນຫຼາຍແຕ່ ເມືອງນານ ຍັງມີຫຼາຍຢ່າງທີ່ຍັງບໍ່ທັນປະຕິບັນໄດ້ເຊັ່ນ: ການສ້າງ ແລະ ສະໜອງຄູຍັງບໍ່ທັນໄດ້ຕາມຄວາມຕ້ອງການ, ມີບັນຫາຄູເຫຼືອບໍ່ພໍ, ຄວາມຮັບຜິດຊອບຂອງຄູຍັງບໍ່ທັນສູງ. ການຈັດການຮຽນ-ການສອນບາງແຫ່ງບໍ່ໄດ້ມາດຖານ ແລະ ບໍ່ໄປຕາມຫຼັກສູດ. ການສ້າງໂຮງຮຽນຕົວແບບຄຸນນະພາບຍັງບໍ່ທັນບັນລຸຕາມແຜນການ. ຄຸນນະພາບການຮຽນ-ການສອນ ຍັງບໍ່ທັນໄດ້ດີເຊັ່ນ: ການສອບເສັງເລື່ອນຊັ້ນຍັງບໍ່ທັນໄດ້ຄຸນນະພາບ ແລະ ຜົນການສອບເສັງຈົບຊັ້ນປ.5 ຍັງບໍ່ທັນໄດ້ຄາດໝາຍ ແລະ ອ່ານ ພາສາລາວບໍ່ທັນຄ່ອງແຄ້ວ (ຫ້ອງການສຶກສາທິການ ແລະ ກິລາເມືອງນານ, 2024).

ຈາກບັນຫາ ແລະ ຂໍ້ຫຍຸ້ງຍາກດັ່ງກ່າວຂ້າງເທິງ ໄດ້ມີນັກສຶກສາໄດ້ເຮັດການຄົ້ນຄວ້າກ່ຽວກັບ “ຜົນກະທົບຂອງລະບົບ 'Grade Zero' ຕໍ່ເດັກນ້ອຍຊົນເຜົ່າໃນ ສປປ ລາວ - ຄຸນນະພາບການສຶກສາຂອງໂຮງຮຽນປະຖົມໃນເຂດຊົນນະບົດ” ('Grade Zero' ໝາຍເຖິງ ການສຶກສາກ່ອນປະຖົມ, ແບບມາດຕະຖານ 3 ປີ ແລະ ຊັ້ນກຽມ 1 ປີ ເອີ້ນວ່າ 'ລະບົບເກຣດສູນ' ຫຼື ການສຶກສາກ່ອນໄວຮຽນ) ການສຶກສາຄັ້ງນີ້ມີຈຸດປະສົງ ເພື່ອສຶກສາການນໍາລະບົບເກດສູນມາໃຊ້ໃນຊັ້ນກຽມປະຖົມ 1 ປີ ແລະ ຜົນກະທົບທີ່ມີຕໍ່ເດັກ ໃນເຂດຊົນນະບົດຂອງລາວ. ຜົນການສຶກສາສະແດງໃຫ້ເຫັນວ່າ ໄດ້ມີການນໍາລະບົບການສຶກສາກ່ອນໄວຮຽນ ມາໃຊ້ໃນສະຖານການສຶກສາຊັ້ນປະຖົມສຶກສາ ແຕ່ຖ້າບ້ານນ້ອຍ ຫຼື ໂຮງຮຽນນ້ອຍ ແມ່ນບໍ່ສາມາດດໍາເນີນການສອນໃນລະບົບນີ້ໄດ້. ນອກຈາກນີ້ການສຶກສາກ່ອນໄວຮຽນ ຍັງມີບົດບາດສໍາຄັນໃນການຮຽນຮູ້ພາສາລາວ ກ່ອນເຂົ້າຮຽນໃນໂຮງຮຽນປະຖົມ. ລະບົບການສຶກສາກ່ອນໄວຮຽນ ເປັນລະບົບທີ່ມີປະສິດທິພາບໃນການເຊື່ອມຕໍ່ຮຽນໃນໂຮງຮຽນປະຖົມ. ໂດຍສະເພາະ ເດັກທີ່ຢູ່ເຂດຊົນນະບົດ ທີ່ມີພື້ນຖານພາສາ ແລະ ວັດທະນະທໍາ ແຕກຕ່າງກັບພາສາລາວ ເພາະການສຶກສາໃນລະບົບນີ້ ມີຄວາມສໍາຄັນທີ່ສຸດ ຈຶ່ງຈໍາເປັນຕ້ອງມີການສ້າງອາຄານຮຽນ, ຝຶກອົບຮົມຄູ ແລະ ການສຶກສາສອງພາສາ (Inui, 2019).

ສະພາບການຈັດການຮຽນ-ການສອນວິຊາພາສາລາວ ຊັ້ນ ປ. 1 ແຕ່ປີ 2020 ຫາ 2024 ປະຕິບັດຕາມຕາຕະລາງຮຽນ ທີ່ກະຊວງສຶກສາທິການ ແລະ ກິລາກໍານົດຄື: ວິຊາພາສາລາວ ຊັ້ນ ປ.1 ມີ 10 ຊົ່ວໂມງຕໍ່ອາທິດ, ຈຸດປະສົງກໍ່ເພື່ອໃຫ້ນັກຮຽນມີທັກສະໃນການຟັງ , ເວົ້າ, ອ່ານ, ຂຽນ ແລະ ຂຽນບົດປະພຶດຕ່າງໆ ທີ່ງ່າຍດາຍ; ຜົນການຮຽນໝົດປີ ແລະ ເສັງຂຶ້ນຫ້ອງ ໄດ້ 100% ທຸກໆ ປີ. ແຕ່ເຖິງແມ່ນວ່ານັກຮຽນເສັງໄດ້ 100% ທຸກປີ ແຕ່ຄຸນນະພາບຂອງນັກຮຽນແມ່ນມີຄຸນນະພາບຕໍ່າ ຫຼື ບໍ່ ກໍ່ບໍ່ມີຄຸນນະພາບເລີຍ ເຊິ່ງສະແດງໃຫ້ເຫັນໃນຊັ້ນ ປ.2 ຂອງຕົ້ນປີຮຽນ ຄູສອນ ຈໍາເປັນຕ້ອງໄດ້ຝຶກສອນພາສາລາວຄືນ ຈຶ່ງສາມາດສອນວິຊາຊັ້ນ ປ.2 ໄປ ແລະ ຫຼັງຈົບ ປ.1 ນັກຮຽນສ່ວນຫຼາຍກໍ່ບໍ່ຮູ້ຂຽນ ຫຼື ອ່ານພາສາລາວ ໃນຄໍາທີ່ງ່າຍໆໄດ້.

ດັ່ງນັ້ນ, ການຈັດການຮຽນ-ການສອນ ຕະຫຼອດ 1 ປີ ຂອງນັກຮຽນ ຊັ້ນ ປ.1 ຈຶ່ງເປັນປີທີ່ມີຄວາມສໍາຄັນຫຼາຍ ແກ່ນັກຮຽນ, ແກ່ຄູສອນ ແລະ ຜູ້ປົກຄອງ ແລະ ມັນເປັນສິ່ງທີ່ສົນໃຈຫຼາຍສໍາລັບ

ຜູ້ຄົ້ນຄວ້າຈຶ່ງມີຄວາມສົນໃຈສຶກສາ ສາສະພາບການຈັດການຮຽນ-ການສອນວິຊາພາສາລາວຊັ້ນ ປ.1. ອາດເປັນຂໍ້ມູນເພື່ອສະເໜີ ແນະໃນການພັດທະນາການການຮຽນ-ການສອນ ວິຊາພາສາລາວຊັ້ນ ປ. 1 ໃນຕໍ່ໜ້າ.

## 2. ອຸປະກອນ ແລະ ວິທີການ

ການຄົ້ນຄວ້າຄັ້ງນີ້ ເປັນການຄົ້ນຄວ້າ ຮູບແບບປະລິມານ ແລະ ຄຸນນະພາບ ເພື່ອສຶກສາ ສະພາບການຈັດການຮຽນ-ການສອນ ວິຊາພາສາລາວ ຊັ້ນປະຖົມສຶກສາປີທີ 1 ກໍລະນີສຶກສາ ເມືອງນານ ໃນສົກຮຽນ 2024-2025 ໃນກຸ່ມຕົວຢ່າງ ທີ່ມີລັກສະນະທີ່ແຕກຕ່າງກັນ ດັ່ງນີ້:

**ຮູບທີ 1: ກອບແນວຄິດໃນການຄົ້ນຄວ້າ**

**ຕົວປ່ຽນຕົ້ນ**

1. ເພດ
2. ວຸດທິການສຶກສາ
3. ປະສົບການສອນ
4. ການຝຶກອົບຮົມ

→

**ຕົວປ່ຽນຕາມ**

1. ການປະຕິບັດຫຼັກສູດ
2. ການຈັດການຮຽນ-ການສອນ
3. ການນຳໃຊ້ສື່ການສອນ
4. ການວັດ ແລະ ປະເມີນຜົນ
5. ສິ່ງອຳນວຍຄວາມສະດວກ

ການຈັດການຮຽນ-ການສອນ ວິຊາພາສາລາວ ຊັ້ນປະຖົມສຶກສາປີທີ 1 ກໍລະນີສຶກສາ ໂຮງຮຽນປະຖົມສຶກສາ ເມືອງນານ, ແຂວງຫຼວງພະບາງ ສົກສຶກສາ 2024-2025 ເປັນການຄົ້ນຄວ້າແບບປະລິມານ ແລະຄຸນນະພາບ.

### 2.1. ກຸ່ມເປົ້າໝາຍ

ກຸ່ມເປົ້າໝາຍໃນການຄົ້ນຄວ້າຄັ້ງນີ້ ແມ່ນຄູສອນ ຊັ້ນ ປ.1 ແລະ ຜູ້ອຳນວຍການໂຮງຮຽນປະຖົມ ຈຳນວນ 73 ຄົນ; ເນື່ອງຈາກວ່າກຸ່ມເປົ້າໝາຍມີຈຳນວນໜ້ອຍ ຈຶ່ງໄດ້ເລືອກກູ່ມຕົວຢ່າງແບບງ່າຍດາຍໂດຍກຳນົດເອົາທັງໝົດ ເພື່ອເປັນກູ່ມຕົວຢ່າງ.

### 2.2. ເຄື່ອງມືທີ່ໃຊ້ການຮວບຮວມຂໍ້ມູນ

ເຄື່ອງມືທີ່ໃຊ້ໃນການຮວບຮວມຂໍ້ມູນແມ່ນນຳໃຊ້ແບບສອບຖາມ ເຊິ່ງປະກອບດ້ວຍ 3 ພາກສ່ວນຄື: 1) ຄຳຖາມຂໍ້ມູນທົ່ວໄປ, 2) ການປະຕິບັດຫຼັກສູດ, ການຈັດກິດຈະກຳການຮຽນ-ການສອນ, ການນຳໃຊ້ສື່ການສອນ, ການວັດ ແລະ ປະເມີນຜົນ ແລະ ສິ່ງອຳນວຍຄວາມສະດວກ ເຊິ່ງເປັນມາດຕາສ່ວນປະເມີນຄ່າ (Rating Scale) ມີ 5 ລະດັບ ຕາມວິທີ ຂອງ Likert Scale (Sisaat, 2017) ແລະ ຄຳຖາມປາຍເປີດ.

### 2.3. ການວິເຄາະຂໍ້ມູນ

ຜູ້ຄົ້ນຄວ້າຄັ້ງນີ້ດຳເນີນການວິເຄາະຂໍ້ມູນ ໂດຍການໃຊ້ໂປຣແກຣມສຳເລັດຮູບທາງສະຖິຕິ (SPSS version 20) ຫາຄ່າສະເລ່ຍ ($\bar{X}$) ແລະ ຄ່າຜັນປ່ຽນມາດຕະຖານ (S.D).

## 3. ຜົນໄດ້ຮັບ

ຈາກການສຶກສາພົບວ່າ ການປະຕິບັດການຈັດການຮຽນການສອນຂອງນັກຮຽນຊັ້ນ ປ.1 ທີ່ໂຮງຮຽນປະຖົມສົມບູນ ເມືອງນານ ແຂວງຫຼວງພະບາງ ແມ່ນສາມາດປະຕິບັດໄດ້ຢູ່ໃນລະດັບດີໃນທຸກດ້ານ ເຊັ່ນ ດ້ານການປະຕິບັດຫຼັກສູດຂອງຜູ້ອຳນວຍການໂຮງຮຽນ ແລະ ຄູສອນ ມີຄ່າ ($\bar{X}$=4.45; S.D=0.36), ດ້ານການຈັດກິດຈະກຳການຮຽນ-ການສອນ ມີຄ່າ ($\bar{X}$=4.36; S.D=0.38), ດ້ານການນຳໃຊ້ສື່ການສອນ ($\bar{X}$=3.88; S.D=0.55), ດ້ານການວັດ ແລະ ປະເມີນຜົນ ($\bar{X}$=4.35; S.D=0.46), ດ້ານສິ່ງອຳນວຍຄວາມສະດວກ ($\bar{X}$=4.16; S.D=0.43).

ນອກນີ້ຍັງມີບັນດາຄູ-ອາຈານ ແລະ ຜູ້ອຳນວຍການໂຮງຮຽນໄດ້ສະແດງຄວາມຄິດເຫັນສະເໜີຕໍ່ການຈັດການຮຽນ-ການສອນວິຊາພາສາລາວຊັ້ນ ປ.1 ດັ່ງນີ້: ຫຼັກສູດຄວນຫຍໍ້ກິດຈະໃຫ້ໜ້ອຍລົງ ຂອງວັດທະນະທຳລາວເຂົ້າຕື່ມ ການຈັດຕາຕະລາງການຮຽນ-ການສອນ ໃຫ້ເປັນຊົ່ວໂມງຄູ່ ບໍ່ໃຫ້ຈັດເປັນຊົ່ວໂມງຄີກ ເພື່ອເຮັດໃຫ້ການຮຽນມີຄວາມຕໍ່ເນື່ອງ ແລະ ປະເມີນການນຳໃຊ້ຫຼັກສູດເປັນປົກກະຕິ.

ຈັດກິດຈະກຳທີ່ຫຼາກຫຼາຍ, ສອດແຊກກິດຈະກຳພື້ນບ້ານປະສານສຽງເວົ້າຈາພາສາລາວ ແທດເໝາະກັບຜູ້ຮຽນ, ນິເທດສຶກສາເມືອງຕ້ອງລົງໃຫ້ຄຳແນະນຳການຈັດການຮຽນ-ການສອນເປັນປົກກະຕິ, ໃຊ້ 4 ທັກສະການສອນ ໃຫ້ເທົ່າທຽມກັນ, ຊ່ວຍເຫຼືອຜູ້ຮຽນອ່ອນ, ເນັ້ນການມີສ່ວນຮ່ວມ ເພື່ອໃຫ້ຜູ້ຮຽນມີຄວາມສາມາດຄົ້ນຄິດດ້ວຍຕົວເອງ.

ການໃຊ້ສື່ການສອນທີ່ເປັນຮູບພາບ, ວີດີໂອ, ບົດເພັງ, ຜະລິດອຸປະກອນປະກອບການສອນທີ່ມີຢູ່ທ້ອງຖິ່ນ, ໜ່ວຍງານສາມັນຄວນຈັດຝຶກອົບຮົມການສ້າງສື່ການສອນແກ່ຄູສອນ.

ການວັດ ແລະ ປະເມີນຜົນຄູຄວນໃຊ້ຂໍ້ສອບແບບອັດຕະໄນ ແລະ ປາລະໄນ ລວມໄປເຖິງການກວດສອບການເຂົ້າຮ່ວມກິດຈະກຳຕ່າງໆ ແລະ ຂັ້ນເທິງຄວນຈັດຝຶກອົບຮົມການວັດ ແລະ ປະເມີນຜົນການຮຽນ-ການສອນ ໂດຍສະເພາະການວັດປະເມີນຮູບແບບ RUBRIC. ແລະ ຜູ້ບໍລິຫານຄວນອຳນວຍຄວາມສະດວກໃນການໃຊ້ອິນເຕີເນັດ ເພື່ອຊອກຫາແຫຼ່ງຂໍ້ມູນໃໝ່ໆ, ການສະ ໜອງອຸປະກອນ ເຂົ້າໃນການຈັດການຮຽນ-ການສອນຕ້ອງພຽງພໍ, ຫ້ອງຮຽນຄວນກວ້າງ, ອາກາດປອດໂປ່ງ, ສະຫງົບ, ປອດໄພ.

## 4. ວິພາກຜົນ

ສະພາບການຈັດການຮຽນ-ການສອນ ວິຊາພາສາລາວສຳລັບນັກຮຽນຊັ້ນ ປ.1 ທີ່ໂຮງຮຽນປະຖົມສຶກສາ ເມືອງນານ ແຂວງຫຼວງພະບາງ ແມ່ນຢູ່ໃນລະດັບດີໃນທຸກດ້ານເຊັ່ນ: ການນຳ

ໃຊ້ຫຼັກສູດ, ດ້ານການຈັດການຮຽນ-ການສອນ, ດ້ານການນຳໃຊ້ສື່ການສອນ, ດ້ານການວັດ-ປະເມີນຜົນ ແລະ ດ້ານສິ່ງອຳນວຍຄວາມສະດວກ ເຊິ່ງຜົນຄົ້ນຄວ້ານີ້ສອດຄ່ອງກັບ ບົດຄົ້ນຄວ້າຂອງ (Viengsavanh, 2022) ຜົນການຄົ້ນຄວ້າພົບວ່າໂຮງຮຽນປະຕິບັດການຮຽນ-ການສອນໄປຕາມຫຼັກສູດ ແລະ ນະໂຍບາຍຂອງກະຊວງສຶກສາທິການ ແລະ ກິລາວາງອອກ ແລະ ສອດຄ່ອງກັບ ແນວທາງ (ສະພາແຫ່ງຊາດລາວ, 2016) ໄດ້ກຳນົດຫຼັກການວ່າ ດ້ວຍຫຼັກສູດການສຶກສາ ແມ່ນເອກະສານທີ່ກຳນົດຫຼັກການ, ຈຸດໝາຍຂອງການສຶກສາ, ໂຄງສ້າງເນື້ອໃນຕ່າງໆ ວິທີການຈັດຕັ້ງການຮຽນ-ການສອນແຕ່ລະຊັ້ນແຕ່ລະສາຍ, ການວັດ ແລະ ປະເມີນຜົນວິຊາຮຽນຕ່າງໆ ເພື່ອຮັບປະກັນໃຫ້ຜູ້ຮຽນມີຄວາມສາມາດ, ທັກສະ, ຄວາມສະຫຼາດ ແລະ ຄຸນສົມບັດສົມທຳປະຕິວັດ.

ການຈັດກິດຈະກຳການຮຽນ-ການສອນ ຜົນການຄົ້ນຄວ້າສອດຄ່ອງກັບ ທິດສະດີຂອງ Pappas, (2023) ເວົ້າວ່ານັກຮຽນມີອິດສະຫຼະໃນການຮຽນຮູ້ຜ່ານການປະຕິບັດຕົວຈິງ (Learning by doing) ແລະ ສອດຄ່ອງກັບຜົນການຄົ້ນຄວ້າຂອງ (Alqahtani & Alhamami, 2024) ຜົນການຄົ້ນຄວ້າພົບວ່າ ວິທີການທັງຄູສອນເປັນໃຈກາງ ແລະ ນັກຮຽນເປັນໃຈກາງມີຄວາມສຳຄັນເທົ່າທຽມກັນ ນອກຈາກນັ້ນຍັງສອດຄ່ອງກັບ (KEOPASITH et al., 2022) ຜົນການຄົ້ນຄວ້າພົບວ່າການຮຽນຮູ້ແບບຮ່ວມມືໃນທີມ, ຄູ່ , ດ່ຽວ ເຮັດໃຫ້ຜົນການຮຽນດີຂຶ້ນຢ່າງມີໄລຍະສຳຄັນ.

ການໃຊ້ສື່ການຮຽນ-ການສອນ ຜົນການຄົ້ນຄວ້າສອດຄ່ອງກັບ (VANG et al., 2020) ຜົນການຄົ້ນຄວ້າພົບວ່າການປະຍຸກໃຊ້ E-Learning ເປັນຂະບວນການຮຽນຮູ້ໂດຍໃຊ້ລະບົບເຄືອຂ່າຍ Internet ໂດຍລວມແມ່ນ ເຮັດໃຫ້ຜູ້ຮຽນເກີດຄວາມໜ້າສົນໃຈໃນການຮຽນ ແລະ ມີພຶດຕິກຳການຮຽນທີ່ດີຂຶ້ນ. ນອກນັ້ນຍັງສອດຄ່ອງກັບ (Mugisha, 2023) ຜົນການຄົ້ນຄວ້າພົບວ່າ ປຶ້ມແບບຮຽນ ແລະ ອຸປະກອນການຂຽນ ແມ່ນໄດ້ນຳໃຊ້ຫຼາຍ ແລະ ເປັນສິ່ງທີ່ຈຳຕ້ອງໄດ້ໃຊ້.

ການວັດ ແລະ ປະເມີນຜົນການຮຽນ-ການສອນ ຜົນການຄົ້ນຄວ້າສອດຄ່ອງກັບ (Shirawia, 2024) ຜົນການຄົ້ນຄວ້າພົບວ່າ ການປະເມີນຮູບແບບຣູບຣິກ (Rubrics) ມີຄຸນນະພາບຫຼາຍສຳລັບຜູ້ຮຽນ ນອກນັ້ນຍັງສອດຄ່ອງກັບ (SYLISONGKHAM & et, 2023) (ຜົນການຄົ້ນຄວ້າພົບວ່າ ສະພາບການບໍລິຫານວິຊາການ ໂຮງຮຽນປະຖົມສຶກສາໂດຍພາບລວມຢູ່ໃນລະດັບດີ. ເມື່ອພິຈາລະນາເປັນລາຍດ້ານພົບວ່າ ທຸກດ້ານ ຢູ່ໃນລະດັບດີ ແລະ ດີກວ່າໝູ່ແມ່ນການບໍລິຫານການວັດ-ປະເມີນຜົນ.

ສິ່ງອຳນວຍຄວາມສະດວກ ຜົນການຄົ້ນຄວ້າສອດຄ່ອງກັບ (Ewhrudjakpo & Kpee, 2024) ຜົນການຄົ້ນຄວ້າພົບວ່າ ສະພາບຂອງໂຮງຮຽນມີອິດທິພົນຫຼາຍຕໍ່ກັບຜົນສຳເລັດທາງການຮຽນ ຂອງນັກຮຽນໃນການສອບເສັງ. ດັ່ງນັ້ນ, ການສຶກສາຈຶ່ງໄດ້ສະເໜີໃຫ້ລັດຖະບານ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງໃນຂະແໜງການສຶກສາ ຕ້ອງປັບປຸງອາຄານສະຖານທີ່ຮຽນໃຫ້ດີຂຶ້ນ ພ້ອມທັງສອດຄ່ອງກັບ (Chamnongphon & et, 2022) ຜົນການຄົ້ນຄວ້າພົບວ່າ ການຮຽນມີຄຸນນະພາບດີ ອາຄານສະຖານທີ່ ແລະ ສິ່ງອຳນວຍຄວາມສະດວກດີ.

ຄຳຄິດເຫັນ ແລະ ຄຳສະເໜີແນະ ຂອງຜູ້ອຳນວຍການໂຮງຮຽນ ແລະ ຄູສອນ ທີ່ມີຕໍ່ການຈັດການຮຽນການສອນວິຊາພາສາລາວຊັ້ນ ປ.1 ສ່ວນຫຼາຍແມ່ນແນະນຳໃນການປັບປຸງຫຼັກສູດທີ່ມີແລ້ວ ຫຍໍ້ກິດຈະໃຫ້ໜ້ອຍລົງ ນຳວັດທະນະທຳລາວປະກອບເຂົ້າໃສ່ບົດກິດຈະກຳ, ການຈັດຕາຕະລາງການຮຽນ-ການສອນ ໃຫ້ເປັນຊົ່ວໂມງຄູ່ ບໍ່ໃຫ້ຈັດເປັນຊົ່ວໂມງຄີກ ເພື່ອເຮັດໃຫ້ການຮຽນມີຄວາມຕໍ່ເນື່ອງ ແລະ ປະເມີນການນຳໃຊ້ຫຼັກສູດເປັນປົກກະຕິ. ສຳລັບການຈັດການຮຽນ-ການສອນ, ນຳໃຊ້ທັກສະການສອນເທົ່າທຽມກັນ, ປັບປຸງຜູ້ຮຽນທີ່ອ່ອນເປັນປົກກະຕິ ແລະ ຊຸກຍູ້ສົ່ງເສີມການຮຽນຮູ້ດ້ວຍຕົນເອງ, ໃຊ້ສື່ການຮຽນການສອນເຊັ່ນ: ຮູບພາບ, ວີດີໂອ, ເພງ ແລະ ໄດ້ຮັບການເຝິກອົບຮົມການຜະລິດສື່ການສອນທີ່ມີຢູ່ໃນທ້ອງຖິ່ນ. ຄູຄວນນຳໃຊ້ການປະເມີນຕົນເອງ ແລະ ການທົດສອບຜູ້ຮຽນ, ເຂົ້າຮ່ວມໃນກິດຈະກຳຕ່າງໆ ແລະ ໄດ້ຮັບການຝຶກອົບຮົມການວັດ ແລະ ປະເມີນຜົນການຮຽນ-ການສອນຮູບແບບ (RUBRIC). ການວັດ ແລະ ປະເມີນຜົນຄູຄວນໃຊ້ຂໍ້ສອບແບບອັດຕະໄນ ແລະ ປາລະໄນ ລວມໄປເຖິງການກວດສອບການເຂົ້າຮ່ວມກິດຈະກຳຕ່າງໆ. ຜູ້ບໍລິຫານ ແລະ ຂັ້ນເທິງ ຄວນສົ່ງເສີມການນຳໃຊ້ອິນເຕີເນັດເພື່ອການເຂົ້າເຖິງຂໍ້ມູນຂ່າວສານ, ຮັບປະກັນການສະໜອງອຸປະກອນການສອນໃຫ້ພຽງພໍ ແລະ ໄດ້ອອກແບບຫ້ອງຮຽນທີ່ກວ້າງຂວາງ, ປອດໄພ, ສະຫງົບ ແລະ ປອດໄພ.

## 5. ສະຫຼຸບ

ສະພາບການຈັດການຮຽນ-ການສອນ ວິຊາພາສາລາວ ຊັ້ນ ປ.1 ຄູສອນປະຕິບັດຕາມປຶ້ມຄູ່ມືຄູ, ປຶ້ມແບບແບບຮຽນ ໃນການຝຶກທັກສະການຟັງ, ການເວົ້າ, ການອ່ານ ແລະ ການຂຽນ, ໃຊ້ເຕັກນິກການສິດສອນດ້ວຍຫຼາຍຮູບແບບ ສ່ວນໃຫຍ່ແມ່ນໃຊ້ເຕັກນິກເອົານັກຮຽນເປັນໃຈກາງ, ໃຊ້ສື່ການຮຽນ-ການສອນ ທີ່ກະຊວງສຶກສາສະ ໜອງໃຫ້ເຊັ່ນຮູບພາບ, ແຜ່ນພັບ, ບັດຄຳ, ຄູສອນໄດ້ຮ່ວມໂມງສອນກັນພາກຮຽນລະຄັ້ງ, ວັດປະເມີນຜົນການຮຽນໂດຍການໃຊ້ການວັດປະເມີນຮູບແບບຣູບິກ (rubrics) ແລະ ຖາມຕອບປາກເປົ່າ, ທ້າຍເດືອນຄູສະຫຼຸບຜົນຄະແນນສົ່ງໃຫ້ພໍ່ແມ່ນັກຮຽນຮັບຊາບ, ສ່ວນສະພາບແວດລ້ອມຫ້ອງຮຽນກວ້າງຂວາງດີ , ອາກາດປອດໂປ່ງເໝາະສົມກັບການຈັດການສອນ.

ຈາກຂໍ້ມູນການສຶກສານີ້ຈຶ່ງມີບາງຂໍ້ສະເໜີແນະ ດັ່ງນີ້ ຫຼັກສູດໃໝ່ຄວນມີຄວາມຮັດກຸມດ້ານເນື້ອໃນໃຫ້ສັ້ນລົງ, ໃຊ້ຄຳສັບທີ່ໃຊ້ກັບຊີວິດປະຈຳວັນ, ການຈັດການຮຽນ-ການສອນຫຼາກຫຼາຍວິທີ ເນັ້ນໃສ່ຄຸນນະພາບຂອງຜູ້ຮຽນເປັນຫຼັກ, ການວັດຜົນການຮຽນຂອງນັກຮຽນ ຄູຄວນປັບປຸງຜູ້ມີຜົນການຮຽນອ່ອນໃຫ້ປົກກະຕິ, ຄູສອນຄວນໄດ້ຮັບການຝຶກອົບຮົມການສອນແບບໃໝ່ໆ ທຸກໆປີ, ລັດຄວນສະໜອງສື່ການສອນ ເຊັ່ນເຄື່ອງສຽງ, ເຄື່ອງສາຍພາບ, ຄອມພິວເຕີ ແກ່ຫ້ອງຮຽນ.

## 6. ຂໍ້ຂັດແຍ້ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າ ຂໍປະຕິຍານຕົນວ່າຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2015). *ວິໄສທັດ ແລະ ຍຸດທະສາດການສຶກສາ.* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ສະພາແຫ່ງຊາດລາວ. (2016). *ກົດໝາຍສຶກສາ.* ນະຄອນຫຼວງວຽງຈັນ: ລັດວິສະຫະກິດການພິມສຶກສາ.

ຫ້ອງການສຶກສາທິການ ແລະ ກິລາເມືອງນານ. (2024). *ບົດສະຫຼຸບແຜນພັດທະນາການສຶກສາ ແລະ ກິລາ.* ເມືອງນານ: ຫ້ອງການສຶກສາທິການ ແລະ ກິລາເມືອງນານ.

Alqahtani, R., & Alhamami, M. (2024). English as a foreign language teaching approaches in Saudi K–12 education: teacher-centered or student-centered. *Education and Learning*, 817-824.

Chamnongphon, P., & et, a. (2022). Study the state of learning and teaching management in distance learning television (DLTV) of primary school students. *journal of Bovorn Multi-Education and Human Social Science*, 1-10.

Ewhrudjakpo, C., & Kpee, P. (2024). SCHOOL FACILITIES AND STUDENTS PERFORMANCE IN EXTERNAL. *African Journal of Educational Research and Policies*, 17-31.

Inui, M. (2019). Impact of the 'Grade Zero' system on minority children in Lao PDR – A qualitative study of pre-primary schools in a rural province. *International Journal of Primary, Elementary and Early Years Education*, 3-13.

Jeanene, S., & Yung, N. (2023). *School improvement, teacher education programs, Laos learning outcomes.* Vienttaine: Australian Council Education Rearch.

KEOPASITH, V., & al, e. (2022). DevelopingEnglish Speaking Skillsof 4thYear Students by Using the Cooperative Learning Strategy onTeam-Pair-Solo TechniqueA Case Study of Faculty of Education, Souphanouvong University. *Souphanouvong University Journal of Multidisciplinary Research and Developmen*, 127-133.

Meyers, C. (2019). Lao Language Policy. In *The Routledge International Hanbook of Language Education Policy in Asia* (1 st ed., p. 13). Routledge.

Mugisha, E. (2023). Teachers' Use of Instructional Materials in the Teaching. *Journal of Research Inovation and Implication in Education*, 42-52.

Pappas, C. (2023, May 15). *John Dewy" Theory.* Retrieved from https://elearningindustry.com/: https://elearningindustry.com/john-deweys-theory-reforming-education-through-experiential-learning

Partnership for twenty first Century skills. (2010). *Framework for 21st Century learning.* Ohio, United States of America: Ohio department of education.

Shirawia, N. H. (2024). Performance Assessment of the Calculus Students by. *Applied Mathematics & Information Sciences*, 1037-1049.

Sisaat, B. (2017). *the preliminary reseach.* (10, Ed.) 2017: suwiriyasan.

SYLISONGKHAM, S., & et, a. (2023). The Primary Schools' Academic Affairs Administration in Salavan District, Salavan Province. *SouphanouvongUniversity Journal of Multidisciplinary Research and Developmen*, 162-168.

Unicef. (2015). *Situational Analysis Student Learning Outcomes in Primary Education in Lao PDR Ministry of Education and Sports.* Vientaine capital: UNICEF in Lao PDR.

Unicef Lao. (2023). *Lao Social Indicator Survey III-2023.* Vientaine capital: Lao Statistics Bureau.

VANG, K., & et, a. (2020). Application of E-Learning in Learning-Teaching Processfor the Fourth year Students, English Program, Faculty of Education,Souphanouvong University. *SouphanouvongUniversity Journal of Multi-disciplinary Research of Souphanouvong University*, 119-127.

Viengsavanh, P. (2022). *learning-teaching management of secondary school in Samakkyxai district Attapue province.* Vientaine capital: National University of Laos.